# ບົດຂ່າວ

## ພິທີມອບ-ຮັບຫ້ອງຜະລິດສື່ເອເລັກໂຕຣນິກເພື່ອການຮຽນການສອນລະດັບມັດທະຍົມສຶກສາຕອນປາຍຢູ່ ສ.ປ.ປ ລາວ ຄັ້ງວັນທີ 10 ກໍລະກົດ 2014 ທີ່ຫ້ອງປະຊຸມໃຫຍ່ຂອງ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

ພິທີມອບ-ຮັບຫ້ອງຜະລິດສື່ເອເລັກໂຕຣນິກເພື່ອການຮຽນ-ການສອນລະດັບມັດທະຍົມສຶກສາຕອນປາຍຢູ່ ສ.ປ.ປ ລາວ ໄດ້ມີຂຶ້ນໃນຕອນເຊົ້າຂອງວັນທີ 10 ກໍລະກົດ 2014 ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໃຫ້ກຽດເຂົ້າຮ່ວມໃນພິທີຝ່າຍລາວມີ ທ່ານ ລີຕູ້ ບົວປາວ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ກິລາ , ມີບັນດາທ່ານ ຫົວໜ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າກົມ, ຜູ້ອຳນວຍການສູນ, ສະຖາບັນ ຈາກກະຊວງຕ່າງໆທີ່ກ່ຽວຂ້ອງ, ຝ່າຍໄທມີ ທ່ານ ນາງສາວ ສຸຊາດາ ໄທບັນເທົາ ຜູ້ອຳນວຍການສຳນັກງານການຮ່ວມມືເພື່ອການພັດທະນາລະຫວ່າງປະເທດ, ກະຊວງການຕ່າງປະເທດແຫ່ງຣາຊະອານາຈັກໄທ, ທ່ານຜູ້ຕາງໜ້າສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທປະຈຳລາວ ພ້ອມດ້ວຍເຈົ້າໜ້າທີ່ພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງ.

ໃນໂອກາດດັ່ງກ່າວ, ທ່ານນາງສາວ ສາຍັນ ກອງໂກຍ ຜູ້ອຳນວຍການສ່ວນໃຫ້ 1, ສຳນັກງານການຮ່ວມມືເພື່ອການພັດທະນາລະຫວ່າງປະເທດ, ກະຊວງການຕ່າງປະເທດແຫ່ງຣາຊະອານາຈັກໄທໄດ້ຂຶ້ນກ່າວລາຍງານ ໂດຍຫຍໍ້ການກໍ່ສ້າງສ້ອມແປງອາຄານ ແລະ ຕິດຕັ້ງອຸປະກອນເຕັກນິກພ້ອມທັງກ່າວມອບຫ້ອງຜະລິດສື່ເອເລັກໂຕຣນິກເພື່ອການຮຽນ-ການສອນ ພ້ອມດ້ວຍອຸປະກອນເຕັກນິກສຳລັບການຜະລິດສື່ຄົບຊຸດໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ ໂດຍແມ່ນ ທ່ານ ຮອງສາດສະດາຈານ ດຣ.ສີສະໝອນ ສິດທິຣາດວົງສາ ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກ່າວຮັບ ແລະ ມອບຕໍ່ໃຫ້ແກ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ຕໍ່ໄປ.

ພິທີມອບ-ຮັບໃນຄັ້ງນີ້ປະກອບດ້ວຍຫ້ອງປະຕິບັດການຄອມພິວເຕີສຳລັບການຜະລິດສື່ເອເລັກໂຕຣນິກ 1 ຫ້ອງ, ຫ້ອງຄວບຄຸມ ແລະ ຕັດຕໍ່ 1 ຫ້ອງ, ຫ້ອງຖ່າຍທຳລາຍການໂທລະພາບ 1 ຫ້ອງ ພ້ອມດ້ວຍອຸປະກອນປະກອບການຜະລິດຄົບຊຸດ ເຊິ່ງມີມູນຄ່າທັງໝົດ 8 ລ້ານຫ້າແສນບາດ ( ສະກຸນເງິນໄທ) ຫຼື ເທົ່າກັບ 2 ຕື້ກວ່າກີບ.

ໂຄງການພັດທະນາສື່ເອເລັກໂຕຣນິກປະກອບການຮຽນການສອນລະດັບມັດທະຍົມສຶກສາຕອນປາຍຢູ່ ສ.ປ.ປ ລາວ ທີ່ໄດ້ສຳເລັດການກໍ່ສ້າງ, ຕິດຕັ້ງອຸປະກອນ ແລະ ຈັດພິທີມອບ-ຮັບໃນມື້ນີ້ກໍແມ່ນອີກໂຄງການໜຶ່ງທີ່ລັດຖະບານໄທມອບທຶນຊ່ວຍເຫຼືອລ້າໃຫ້ແກ່ລັດຖະບານລາວໂດຍມອບໃຫ້ກະຊວງສຶກສາທິການ ແລະ ກິລາເປັນຜູ້ຈັດຕັ້ງປະຕິບັດໃນຂອບການຮ່ວມມືສອງຝ່າຍ.

ໂຄງການພັດທະນາສື່ເອເລັກໂຕຣນິກປະກອບດ້ວຍ 2 ໂຄງການຍ່ອຍ: 1) ໂຄງການພັດທະນາສື່ເລັກໂຕຣນິກປະກອບການສອນ ມ.ປາຍ ທີ່ເນັ້ນການໃຊ້ໂປຣແກຣມຄອມພິວເຕີໃນການຜະລິດສື່ເອເລັກໂຕຣນິກປະກອບການສອນໃນໂຮງຮຽນຕາມເນື້ອໃນບົດຮຽນທີ່ກຳນົດໄວ້ໃນຫຼັກສູດ ແລະ ປຶ້ມແບບຮຽນເພື່ອສ້າງເງື່ອນໄຂເອື້ອອຳນວຍໃຫ້ຄູມີອຸປະກອນປະກອບການສອນທີ່ມີຮູບ-ສຽງໃນຮູບແບບຂອງເຕັກໂນໂລຊີທີ່ທັນສະໄໝເຮັດໃຫ້ນັກຮຽນໄດ້ຮຽນຮູ້ຢ່າງມີຄວາມໝາຍ. ນອກຈາກການເຝິກອົບຮົມການຜະລິດສື່ເອເລັກໂຕຣນິກປະກອບການສອນໃຫ້ຄູສາມາດຜະລິດສື່ການສອນດ້ວຍຕົນເອງແລ້ວ, ໂຄງການຍັງຈະດຳເນີນການຜະລິດສື່ເອເລັກໂຕຣນິກປະກອບການສອນໃນຮູບແບບ VCD/DVD ເພື່ອຕອບສະໜອງຄວາມຕ້ອງການຂອງການຮຽນການສອນໃນໂຮງຮຽນສາມັນ ໃນຂອບເຂດທົ່ວປະເທດ. 2) ໂຄງການຍ່ອຍທີ່ສອງແມ່ນໂຄງການພັດທະນາລາຍການໂທລະພາບເພື່ອການຮຽນການສອນເປັນໂຄງການທີ່ເນັ້ນການຜະລິດ ແລະ ອອກອາກາດລາຍການໂທລະພາບເພື່ອສົ່ງເສີມການຮຽນການສອນໃນໂຮງຮຽນຕາມເນື້ອໃນບົດຮຽນທີ່ກຳນົດໄວ້ໃນຫຼັກສູດ ແລະ ປຶ້ມແບບຮຽນສາຍສາມັນສຶກສາເພື່ອໃຫ້ນັກຮຽນໃນຂອບເຂດທົ່ວປະເທດມີໂອກາດ ແລະ ເງື່ອນໄຂໄດ້ຮັບການສຶກສາເພີ່ມຕື່ມຈາກການຮຽນນຳຄູຢູ່ໂຮງຮຽນ.

ຂໍ້ມູນເພີ່ມເຕີມໂທ: 212338; 213161 ຄະນະຮັບຜິດຊອບການເຜີຍແຜ່ຂ່າວ


ພິທີມອບ-ຮັບ
ຫ້ອງປະຕິບັດການ ໂຄງການພັດທະນາສື່ເອເລັກໂຕຣນິກເພື່ອການຮຽນ-ການສອນ
ລະດັບມັດທະຍົມສຶກສາຕອນປາຍຂອງ ສ.ປ.ປ ລາວ
ພາຍໃຕ້ໂຄງການຮ່ວມມື ລະຫວ່າງ
ລັດຖະບານແຫ່ງ ສ.ປ.ປ ລາວ ແລະ ລັດຖະບານແຫ່ງຣາຊະອານາຈັກໄທ
ວັນທີ 10 ກໍລະກົດ 2014, ນະຄອນຫຼວງວຽງຈັນ
พิธีส่ง - มอบ
ห้องปฏิบัติการโครงการพัฒนาสื่ออิเล็กทรอนิกส์เพื่อการเรียนการสอ
ระดับมัธยมศึกษาตอนปลาย ของ สปป.ลาว
ภายใต้ โครงการความร่วมมือ
ระหว่าง รัฐบาลแห่งราชอาณาจักรไทย และ รัฐบาลแห่ง สปป. ลาว
วันที่ 10 กรกฎาคม 2557 นครหลวงเวียงจันทน์




ON AIR



